ໂຍຮັນ 15:9 ພຣະບິດາໄດ້ຊົງຮັກເຮົາຢ່າງໃດ ຝ່າຍເຮົາໄດ້ຮັກພວກທ່ານຢ່າງນັ້ນເຫມືອນກັນ ຈົ່ງຕັ້ງຢູ່ໃນຄວາມຮັກຂອງເຮົາ

ເອຊາຢາ 43:1 ອິສຣາເອນເອີຍ, ພຣະຜູ້ເປັນເຈົ້າອົງຊົງສ້າງເຈົ້າໄດ້ກ່າວວ່າ, "ຢ່າສູ່ຢ້ານ ເຮົາ ຈະຄຸ້ມຄອງເຈົ້າ ເຮົາໄດ້ເອີ້ນເຈົ້າຕາມຊື່ ເຮົາໄດ້ໄຖ່ພວກເຈົ້າມາເປັນຄົນຂອງເຮົາ

ເຢເຣມີ 1:5 "ເຮົາໄດ້ຮູ້ຈັກເຈົ້າ ກ່ອນທີ່ເຮົາໄດ້ເຮັດໃຫ້ເຈົ້າເປັນຕົວຕົນຢູ່ໃນທ້ອງແມ່ ເຮົາໄດ້ ເລືອກເຈົ້າໄວ້ແລ້ວ ກ່ອນເຈົ້າເກີດ ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ບໍຣິສຸດແລ້ວ ແລະໄດ້ສະຖາ ປະນາໃຫ້ເຈົ້າເປັນຜູ້ປະກາດພຣະທັມແກ່ນາງຊາດ"

ໂຍຮັນ 15:16 ບໍ່ແມ່ນທ່ານທັງຫລາຍໄດ້ເລືອກເອົາເຮົາ ແຕ່ຝ່າຍເຮົາໄດ້ເລືອກເອົາພວກ ທ່ານແລະໄດ້ແຕ່ງຕັ້ງທ່ານທັງຫລາຍ ເພື່ອໃຫ້ໄປເກີດຜົນ ແລະເພື່ອຜົນຂອງພວກທ່ານ ຈະຕັ້ງຢູ່ຖາວອນ ເພື່ອວ່າ, ເມື່ອທ່ານທັງຫລາຍຈະທູນຂໍສິ່ງໃດຈາກພຣະບິດາໃນນາມ ຂອງເຮົາ ພຣະອົງກໍຈະຊົງປະທານສິ່ງນັ້ນແກ່ພວກທ່ານ

3 ໂຍຮັນ 1:2 ທ່ານທີ່ຮັກເອີຍ, ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເຣີນດີຂຶ້ນໃນທຸກສິ່ງ ແລະມີ ສຸຂພາບແຂງແຮງເຫມືອນຢ່າງຈິດວິນຍານຂອງທ່ານຈະເຣີນດີຢູ່ນັ້ນ

ເອຊາຢາ 43:4 ແລະເອົາຊົນຊາດທັງປວງແລກກັບຊີວິດຂອງເຈົ້າ ເພາະວ່າເຈົ້າມີຄຸນຄ່າສໍາ ລັບເຮົາ ເຮົາເປັນຜູ້ໃຫ້ກຽດແລະຮັກເຈົ້າ

ເຢເຣມີ 31:3 ເຮົາກໍໄດ້ສະແດງຄວາມເມດຕາແລະປາກົດໃຫ້ເຂົາເຫັນ ຊາວອິສຣາເອນເອີຍ ເຮົາໄດ້ຮັກແພງພວກເຈົ້າສເມີມາ ດັ່ງນັ້ນເຮົາຈຶ່ງຈະຮັກແພງພວກເຈົ້າຢ່າງຫມັ້ນຄົງສືບ ຕໍ່ໄປ

ໂຮເຊອາ 11:8 ໂອ ເອຟຣາອິມເອີຍ, ເຮັດແນວໃດເຮົາຈຶ່ງຈະເຊົາກ່ຽວຂ້ອງເຈົ້າໄດ້ ໂອ ອິສຣາ ເອນເອີຍ, ຈະປະຖິ້ມເຈົ້າໄດ້ດ້ວຍວິທີໃດ ຈະທໍາລາຍເຈົ້າເຫມືອນເຮົາທໍາລາຍເມືອງອັດມາ ໄດ້ບໍ ຫລືຈະກະທໍາຕໍ່ເຈົ້າເຫມືອນເຮົາກະທໍາກັບເມືອງເຊບົ່ວອິມນັ້ນບໍ່ ເຮົາຈະບໍ່ເຮັດດັ່ງ ນັ້ນດອກ ຈິດໃຈເຮົາແສນກະວົນກະວາຍ ເພາະວ່າສົງສານພວກເຈົ້າ

ໂຍຮັນ 3:16 ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອ ທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ

ເອຊາຢາ 49:15,16 ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງຕອບວ່າ, “ຜູ້ຍິງທີ່ລືມລູກ ແລະບໍ່ຮັກລູກ ຂອງຕົນເອງມີບໍ່ ເຖິງແມ່ນວ່າມີຜູ້ລືມລູກຂອງຕົນກໍ່ຕາມ ແຕ່ເຮົາຈະບໍ່ລືມພວກເຈົ້າ ຈັກເທື່ອ 16 ເບິ່ງແມ່, ເຮົາບໍ່ເຄີຍລືມເຈົ້າ ເຮົາໄດ້ຂຽນຊື່ຂອງເຈົ້າໄວ້ໃນໂອ້ງຜາມືຂອງເຮົາ ແລ້ວ

ເອຊາຢາ 41:13 ເຮົາເປັນພຣະຜູ້ເປັນເຈົ້າຂອງເຈົ້າ ເຮົາຈະຫນຸນກຳລັງແລະບອກພວກເຈົ້າ ວ່າ ຢ່າສູ່ຢ້ານ ເພາະເຮົາຈະຊ່ວຍເຈົ້າ

ມັດທາຍ 28:20 ສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນຫມົດກັບ

ໂຍຮັນ 14:1 ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປ ຈົ່ງວາງໃຈໃນພຣະເຈົ້າແລະໄວ້ວາງໃຈ ໃນເຮົາເຫມືອນກັນ

ເອຊາຢາ 41:14 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ອິສຣາເອນເອີຍ, ເຈົ້າຍັງເປັນຜູ້ນ້ອຍແລະ ອ່ອນແອ ແຕ່ຢ່າສູ່ຢ້ານ ເພາະເຮົາຈະຊ່ວຍເຈົ້າ ເຮົາຄືພຣະເຈົ້າອົງບໍຣິສຸດຂອງອິສຣາເອນ ເຮົາເປັນຜູ້ຊ່ວຍໄຖ່ເອົາພວກເຈົ້າໃຫ້ພົ້ນໄພ

ເອຊາຢາ 43:2 ເມື່ອເຈົ້າຜ່ານໄພ ຫລືລວຍນ້ຳເລິກ ເຮົາກໍ່ຈະຢູ່ນຳເຈົ້າ ເຈົ້າຈຶ່ງຈະຜ່ານພົ້ນ ຄວາມຍາກລຳບາກໄປໄດ້ ເມື່ອເຈົ້າຍ່າງຜ່ານໄຟໄປ ມັນຈະບໍ່ໄຫມ້ເຈົ້າ ເຈົ້າຈະຜ່ານຜ່າ ຄວາມຫຍຸ້ງຍາກເຫລົ່ານີ້ໄປໄດ້

ເພງສັນລະເສີນ 23:1-6 ພຣະຜູ້ເປັນເຈົ້າຊົງເປັນຜູ້ລ້ຽງຂ້າພຣະອົງ ຂ້າພຣະອົງມີທຸກສິ່ງທີ່ຂ້າ ພຣະອົງຕ້ອງການ 2 ພຣະອົງຊົງພາຂ້າພຣະອົງໃຫ້ພັກເຊົາຢູ່ໃນປ່າຫຍ້າອັນຂຽວສົດ ພຣະ ອົງຊົງພາກຂ້າພຣະອົງໄປໃນບ່ອນທີ່ບໍ່ນ້ຳອັນສົດໃສ ແລະງຽບສງັດ 3 ພຣະອົງຊົງໃຫ້ຂ້າ ພຣະອົງມີແຮງຂຶ້ນໃຫມ່ ແລະຊົງພາຂ້າພຣະອົງໄປໃນທາງທີ່ຖືກຕ້ອງຕາມທີ່ພຣະອົງຊົງ ສັນຍາໄວ້ 4 ຂ້າແດ່ພຣະຜູ້ເປັນເຈົ້າ ເຖິງແມ່ນວ່າທາງຈະຜ່ານຄວາມມືດມົນອັນເລິກລັບ ຂ້າພຣະອົງກໍ່ຈະບໍ່ຢ້ານ ເພາະວ່າພຣະອົງຊົງຢູ່ກັບຂ້າພຣະອົງ ໄມ້ຄ້ອນແລະໄມ້ເທົ້າທີ່ພຣະ ອົງຊົງໃຊ້ກໍ່ຊ່ວຍໃຫ້ຂ້າພຣະອົງພົ້ນພັຍ 5 ພຣະອົງຊົງລ້ຽງດູຂ້າພຣະອົງຢ່າງອີ່ມຫນຳສຳ ຮານຖ້ຳມກາງສັດຕຣູທັງຫລາຍ ພຣະອົງຊົງຕ້ອນຮັບຂ້າພຣະອົງໂດຍຖອກນ້ຳມັນຫອມ ໃສ່ເທິງຫົວຂ້າພຣະອົງ ແລະຊົງໃຫ້ຈອກຂ້າພຣະອົງເຕັມລົ້ນຢູ່ 6 ຄວາມດີແລະຄວາມຮັກ ຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊົ່ວຊີວິດ ແລະພຣະວິຫານຂອງພຣະອົງກໍ່ຈະ

ເປັນເຮືອນຢູ່ຂອງຂ້າພຣະອົງຕລອດໄປ

ໂຍຮັນ 14:27 ເຮົາມອບຄວາມສງົບສຸກໄວ້ກັບທ່ານທັງຫລາຍ ຜ່ານເຮົາໃຫ້ແກ່ພວກທ່ານບໍ່ ເຫມືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກທ່ານວຸ້ນວາຍໄປແລະຢ່າຊູ່ຍ້ານ

ຟີລິປອຍ 4:7 ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດ ໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຍຊູຄຣິດ

ສຸພາສິດ 3:24 ຖ້າເຈົ້ານັ່ງ ເຈົ້າຈະບໍ່ຢ້ານ ເມື່ອເຈົ້ານອນ ກໍຈະຫລັບໄປຢ່າງຜາສຸກສົດຊື່ນ

ເພງສັນລະເສີນ 4:8 ຂ້າພຣະອົງຈະເອນກາຍລົງນອນຫລັບໃນຄວາມສັນຕິ ຂ້າແດ່ພຣະຜູ້ເປັນ ເຈົ້າ ເພາະພຣະອົງເທົ່ານັ້ນທີ່ຊົງທໍາໃຫ້ຂ້າພຣະອົງອາໄສຢູ່ຢ່າງປອດພັຍ

ເພງສັນລະເສີນ 33:18 ພຣະຜູ້ເປັນເຈົ້າເຝົ້າເບິ່ງແຍງຜູ້ທີ່ຢ້ານຢໍາພຣະອົງ ແລະຜູ້ທີ່ເຊື່ອໃນ ຄວາມຮັກອັນຫມັ້ນຄົງຂອງພຣະອົງ

ໂຣມ 5:2 ໂດຍທາງພຣະອົງເຮົາທັງຫລາຍຈຶ່ງໄດ້ຮັບຄວາມແນະນໍາເຂົ້າໄປໃນຮົ່ມພຣະຄຸນ ທີ່ ພວກເຮົາຢືນຢູ່ດ້ວຍຄວາມເຊື່ອ ແລະພວກເຮົາຊົມຊື່ນຍິນດີ ໃນຄວາມຫວັງວ່າຈະໄດ້ມີ ສ່ວນໃນສະງ່າຣາສີຂອງພຣະເຈົ້າ

ເອຊາຢາ 55:12 ເຈົ້າຈະອອກໄປດ້ວຍຄວາມມ່ວນຊື່ນ ຈະຖືກນໍາອອກຈາກເມືອງໄປດ້ວຍ ສວັດດີພາບ ພູໃຫຍ່ແລະນ້ອຍທັງຫລາຍຈະເປັ່ງສຽງຮ້ອງເພງ ກົກໄມ້ທັງຫລາຍກໍຈະຮ້ອງ ດ້ວຍຄວາມມ່ວນຊື່ນ

ໂຍຮັນ 16:22 ດັ່ງນັ້ນໃນບັດນີ້ທ່ານທັງຫລາຍກໍມີຄວາມທຸກໂສກ ແຕ່ເຮົາຈະເຫັນພວກທ່ານ ອີກແລະໃຈຂອງພວກທ່ານຈະຊົມຊື່ນຍິນດີ ແລະບໍ່ມີຜູ້ໃດຈະເອົາຄວາມຍິນດີນັ້ນອອກໄປ ຈາກພວກທ່ານໄດ້

ລູກາ 12:9 ແຕ່ຜູ້ໃດຈະປະຕິເສດເຮົາຕໍ່ຫນ້າມະນຸດ ຜູ້ນັ້ນຈະຖືກປະຕິເສດຕໍ່ຫນ້າພວກ ເທວະດາຂອງພຣະເຈົ້າ

ມັດທາຍ 10:30 ເຖິງຜົມຂອງທ່ານກໍຊົງນັບໄວ້ແລ້ວຫມົດທຸກເສັ້ນ

ເອຊາຢາ 54:10 ພູໃຫຍ່ແລະນ້ອຍທັງຫລາຍອາດພັງທະລາຍລົງ ແຕ່ຄວາມຮັກຂອງເຮົາທີ່ມີ ຕໍ່ເຈົ້າຈະບໍ່ສິ້ນສຸດຈັກເທື່ອ ເຮົາຈະຮັກສາສັນຍາສັນຕິພາບຂອງເຮົາໄວ້ຕລອດໄປ” ພຣະ ຜູ້ເປັນເຈົ້າອົງຊົງເມດຕາສົງສານເຈົ້າຊົງກ່າວດັ່ງນີ້ແຫລະ

ມັດທາຍ 11:28-30 “ບັນດາຜູ້ທີ່ເຮັກການຫນັກຫນ່ວງແລະແບກພາຣະຫນັກ ຈົ່ງມາຫາເຮົາ

ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ 29 ຈົ່ງເອົາແອກຂອງເຮົາແບກໄວ້ ແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມລົງ ແລ້ວຈິດໃຈຂອງ ທ່ານຈະໄດ້ພົບຄວາມເຊົາເມື່ອຍ 30 ດ້ວຍວ່າແອກຂອງເຮົາກໍພໍເຫມາະ ແລະພາຣະຂອງ ເຮົາກໍເບົາ"

ເພງໂຊໂລໂມນ 2:10 ຄົນຂອງຂ້ອຍໄດ້ເອີ່ຍປາກຕໍ່ຂ້ອຍວ່າ,ຄົນຮັກຂອງນາງ:"ທີ່ຮັກຂອງ ອ້າຍຈົ່ງມາເດີ້ ສຸດທີ່ຮັກຂອງອ້າຍຈົ່ງມານຳອ້າຍ

ໂຮເຊອາ 2:14,19,20 ດ້ວຍເຫດນັ້ນ ເຮົາຈະເກັ້ງກ່ອມນາງດ້ວຍຄຳອ່ອນຫວານ ແລ້ວຈະພາ ນາງໄປຍັງຖິ່ນກັນດານອີກ ແລະຈະເວົ້າກັບນາງຢ່າງເປີດອົກວ່າ ເຮົາຈະຄືນສວນອະງຸ່ນ ໃຫ້ແກ່ນາງ 19 ອິສຣາເອນເອີຍ, ເຮົາຈະຫມັ້ນເຈົ້າໄວ້ເປັນເຈົ້າສາວຂອງເຮົາ ເຮົາຈະຫມັ້ນ ເຈົ້າໄວ້ຢ່າງຖືກຕ້ອງແລະທ່ຽງທັມ ໂດຍຈະສະແດງຄວາມຮັກຫມັ້ນຄົງແລະຄວາມກະຣຸນາ ຕໍ່ເຈົ້າ ຈະໃຫ້ເຈົ້າເປັນຂອງເຮົາຕລອດໄປ 20 ເຮົາຈະຮັກສາຄຳຫມັ້ນສັນຍາຂອງເຮົາໄວ້ ແລະໃຫ້ເຈົ້າເປັນຂອງເຮົາ ເຈົ້າຈະຮູ້ຈັກພຣະຜູ້ເປັນເຈົ້າ

ອົບພະຍົກ 3:14 ພຣະເຈົ້າຈຶ່ງຊົງບອກໂມເຊວ່າ, "ເຮົາເປັນຜູ້ຊຶ່ງເຮົາເປັນ" ພຣະອົງຊົງກ່າວຕໍ່ ໄປວ່າ, "ໃຫ້ເຈົ້າໄປບອກຊາວອິສຣາເອນວ່າ ຜູ້ຊົງພຣະນາມວ່າ "ເຮົາເປັນ" ໄດ້ສົ່ງຂ້າພະ ເຈົ້າມາຫາທ່ານທັງຫລາຍ"

ໂຮເຊອາ 13:4 ເຮົາຄື ພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ ຊຶ່ງໄດ້ນຳພວກເຈົ້າອອກມາຈາກປະ ເທດເອຢິບ ໃນເວລານັ້ນພວກເຈົ້າບໍ່ຮູ້ຈັກພຣະເຈົ້າອົງໃດນອກຈາກເຮົາ ເຮົາເປັນພຣະຜູ້ ຊ່ວຍໃຫ້ພົ້ນອົງດຽວຂອງພວກເຈົ້າ

ໂຍຮັນ 15:14 ຖ້າທ່ານທັງຫລາຍເຮັດຂໍ້ທີ່ເຮົາໄດ້ບັນຍັດໄວ້ ພວກທ່ານກໍເປັນມິດສະຫາຍ ຂອງເຮົາ

ພຣະນິມິດ 3:20 ເບິ່ງແມ່, ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ເຮົາຈະຮັບປະທານອາຫານຮ່ວມກັບຜູ້ນັ້ນ ແລະຜູ້ນັ້ນຈະຮັບປະ ທານອາຫານຮ່ວມກັບເຮົາ